**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ພັກປະຊາຊົນປະຕິວັດລາວ**
**ຄະນະໂຄສະນາອົບຮົມສູນກາງພັກ** **ເລກທີ 58 /ຄອສພ**

**ນະຄອນຫຼວງວຽງຈັນ, ວັນທີ 30 ເມສາ 2025**

# ບົດແນະນຳ
# ວ່າດ້ວຍການສ້າງຈິດໃຈເອກະລາດ
# ເປັນເຈົ້າຕົນເອງ ວຽກງານໂຄສະນາອົບຮົມ ໃນໄລຍະໃໝ່

**ເພື່ອຜັນຂະຫຍາຍມະຕິ 04/ກມສພ ວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່.** ຄະນະໂຄສະນາອົບຮົມສູນກາງພັກ ຈຶ່ງໄດ້ຫັນເອົາມະຕິດັ່ງກ່າວ ມາຜັນຂະຫຍາຍເຂົ້າໃນວຽກງານໂຄສະນາອົບຮົມ ເພື່ອສ້າງບາດກ້າວບຸກທະລຸໃນການພັດທະນາ ແລະ ຍົກຄຸນນະພາບ ວຽກງານໂຄສະນາອົບຮົມໃຫ້ເຕີບໃຫຍ່, ໜັກແໜ້ນ, ເຂັ້ມແຂງ, ຮັບປະກັນການພັດທະນາບົນພື້ນຖານສ້າງຈິດໃຈເອກະລາດ, ເປັນເຈົ້າຕົນເອງ ວຽກງານໂຄສະນາອົບຮົມ ໃນໄລຍະໃໝ່ ແລະ ບົດແນະນຳນີ້ ໄດ້ຮັບຮອງເອົາໃນກອງປະຊຸມວຽກງານໂຄສະນາອົບຮົມທົ່ວປະເທດ ປະຈຳປີ 2024 ເຊິ່ງເປີດຂຶ້ນໃນວັນທີ 23-24 ມັງກອນ 2025 ທີ່ນະຄອນຫຼວງວຽງຈັນ ໂດຍມີເນື້ອໃນ ດັ່ງນີ້:

## I. ເຂົ້າໃຈຄວາມໝາຍຂອງວຽກງານໂຄສະນາອົບຮົມ.

### 1. ຄວາມໝາຍຂອງວຽກງານໂຄສະນາອົບຮົມ.

ວຽກງານໂຄສະນາອົບຮົມຂອງພັກ ແມ່ນສ່ວນປະກອບທີ່ສຳຄັນ ເປັນໃຈກາງວຽກງານການເມືອງ-ແນວຄິດຂອງພັກ, ເປັນວຽກງານທີ່ເຮັດໄປກ່ອນຂະບວນການ, ເຮັດໄປພ້ອມຂະບວນການ ແລະ ເຮັດຕາມຫຼັງຂະບວນການ. ການເຮັດວຽກງານໂຄສະນາອົບຮົມ ເນື້ອແທ້ ແມ່ນຜັນຂະຫຍາຍບັນດາແນວທາງນະໂຍບາຍຂອງພັກ ເປັນຕົ້ນແມ່ນ: ການເຜີຍແຜ່ທາງດ້ານທິດສະດີພຶດຕິກຳ, ແນວຄິດໄກສອນ ພົມວິຫານ, ບັນດາແນວທາງນະໂຍບາຍຂອງພັກ-ລັດ, ກົດໝາຍຂອງລັດ, ມະຕິ, ຄຳສັ່ງຂອງກົມການເມືອງສູນກາງພັກ, ເກັບກຳສະພາບແນວຄິດທາງສຽງສັງຄົມ ເພື່ອຕອບແກ້ ແລະ ນຳພາແນວຄິດຂອງຄົນໃນສັງຄົມ ໂດຍເລັ່ງໃສ່ໂຄສະນາສຶກສາອົບຮົມໃຫ້ບັນດາເປົ້າໝາຍໄດ້ຮັບຮູ້ ແລະ ເຂົ້າໃຈ, ມີຄວາມຕື່ນຕົວ ແລະ ເປັນເຈົ້າການ ປະຕິບັດຕາມແນວທາງນະໂຍບາຍຂອງພັກ ໃຫ້ສຳເລັດຜົນຕາມຄາດໝາຍທີ່ວາງໄວ້. ດ້ານໜຶ່ງ ການເຮັດວຽກງານໂຄສະນາອົບຮົມ

ແມ່ນການໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ-ລັດ ຫາກບໍ່ແມ່ນ ເຮັດການໂຄສະນາສິນຄ້າ ຂາຍເຄື່ອງຄືທົ່ວໄປ ດັ່ງທີ່ພະນັກງານຈຳນວນໜຶ່ງ ຍັງເຂົ້າໃຈບໍ່ຖືກ.

**2. ຄວາມໝາຍຂອງການສ້າງຈິດໃຈເອກະລາດ ເປັນເຈົ້າຕົນເອງ.**

ອີງໃສ່ມະຕິ 04/ກມສພ ວ່າດ້ວຍການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່. ການສ້າງຈິດໃຈເອກະລາດ ເປັນເຈົ້າຕົນເອງ ແມ່ນການເຊີດຊູຄວາມເປັນເອກະລາດ, ກຽດສັກສີຂອງຊາດ, ແມ່ນການຍົກສູງສະຕິຊາດ, ເປັນເຈົ້າຕົນເອງ; ມີຈິດໃຈຮັກຊາດອັນດູດດື່ມ, ມີຄວາມເອກອ້າງທະນົງໃຈຂອງຄວາມເປັນຊາດ, ມີຈິດໃຈເສຍສະຫຼະອຸທິດຕົນເພື່ອປະເທດຊາດ ດ້ວຍການເພິ່ງພາຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ບໍ່ເອື່ອຍອີງໃສ່ຜູ້ອື່ນ ຫຼື ການຈັດຕັ້ງ; ການພັດທະນາຕົນເອງ ແມ່ນການພັດທະນາດ້ວຍສະຕິປັນຍາ, ດ້ວຍຄວາມສາມາດກຳລັງແຮງທີ່ມີຢູ່ ແລະ ເດີນໜ້າດ້ວຍລຳຂາຂອງຕົນເອງ ຢ່າງເປັນເຈົ້າການ; ຢາກເປັນເຈົ້າຕົນເອງໄດ້ ຕ້ອງເສີມຂະຫຍາຍສະຕິປັນຍາ, ກຳລັງແຮງ, ຂຸດຄົ້ນທ່າແຮງບົ່ມຊ້ອນດ້ານຊັບພະຍາກອນມະນຸດ, ຊັບພະຍາກອນທຳມະຊາດຢ່າງເປັນເຈົ້າການ, ເປັນເຈົ້າການພັດທະນາຊັບພະຍາກອນມະນຸດ, ບຸກທະລຸທາງດ້ານຈິນຕະນາການ, ສ້າງຄວາມຮັບຮູ້, ເຂົ້າໃຈ ຂອງພັກ, ລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນ ຕໍ່ການສ້າງຄວາມເປັນເຈົ້າດ້ານຄວາມຮັບຮູ້ ເພື່ອຂຸດຄົ້ນນຳໃຊ້ສິ່ງທີ່ມີຢູ່ຂອງປະເທດຊາດ ແລະ ສັງຄົມລາວ ໃນສິ່ງທີ່ເຮົາສາມາດເຮັດໄດ້, ຮູ້ອີງໃສ່ທ່າແຮງບົ່ມຊ້ອນຂອງປະເທດ, ຮູ້ວາງແຜນໃນການຂຸດຄົ້ນ, ຄຸ້ມຄອງ, ນຳໃຊ້ຊັບພະຍາກອນຂອງຊາດ ໃຫ້ອອກມາເປັນທຶນຮອນຢ່າງມີປະສິດທິຜົນ; ຕ້ອງເປັນເຈົ້າການພັດທະນາພື້ນຖານການຜະລິດ, ການບໍລິການ, ສ້າງໃຫ້ມີຜະລິດຕະພັນທີ່ຫຼາກຫຼາຍ ໝາຍຄວາມວ່າ: ສ້າງໃຫ້ຄົນລາວເປັນເຈົ້າຕົນເອງໃນການຜະລິດໃຫ້ຫຼາຍຂຶ້ນ ເພື່ອສ້າງພື້ນຖານການຜະລິດໃຫ້ໜັກແໜ້ນ, ເຂັ້ມແຂງ ແລະ ມີສິນຄ້າບໍລິໂພກ-ອຸປະໂພກ ພຽງພໍຕອບສະໜອງພື້ນຖານການດຳລົງຊີວິດ ຂອງສັງຄົມລາວ ໂດຍບໍ່ເພິ່ງພາອາໄສແຕ່ການຜະລິດຈາກພາຍນອກ ແລະ ເຮັດໃຫ້ກ້າວໄປສູ່ການຜະລິດສົ່ງອອກຕ່າງປະເທດ ແລະ ສ້າງມູນຄ່າເພີ່ມ ໃຫ້ແກ່ການສົ່ງອອກສິນຄ້າ. ພ້ອມທັງຊຸກຍູ້ສົ່ງເສີມໃຫ້ຄົນລາວເປັນເຈົ້າການບໍລິໂພກສິນຄ້າ ຫຼື ຊົມໃຊ້ຜະລິດຕະພັນຂອງຄົນລາວ ຈຶ່ງຈະເຮັດໃຫ້ເສດຖະກິດ, ເງິນຕາຂອງປະເທດເຮົາແຂງຄ່າ, ໝັ້ນທ່ຽງ ແລະ ບັນລຸໄດ້ການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່.

## II. ເຂົ້າໃຈເລິກໜ່ວຍງານທີ່ເຮັດວຽກງານໂຄສະນາອົບຮົມ ແລະ ການພັດທະນາວຽກງານໂຄສະນາອົບຮົມ ບົນພື້ນຖານສ້າງຈິດໃຈເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່.

**1. ໜ່ວຍງານທີ່ເຮັດວຽກງານໂຄສະນາອົບຮົມ.**

ສຳລັບໜ່ວຍງານທີ່ເຮັດໜ້າທີ່ໂດຍກົງ ໃນວຽກງານໂຄສະນາອົບຮົມຂອງພັກ ຂັ້ນສູນກາງ ປະກອບດ້ວຍໜ່ວຍງານຫຼັກ ດັ່ງນີ້:

✱ ໜ່ວຍງານທີ່ເຮັດວຽກໂດຍກົງ ມີ:

- ກົມໂຄສະນາ.

- ກົມອົບຮົມ.
- ສະພາທິດສະດີສູນກາງພັກ.
- ສື່ມວນຊົນ (ວິທະຍຸ, ໂທລະພາບ, ໜັງສືພິມ, ວາລະສານ).
- ໜ່ວຍງານຄົ້ນຄວ້າເກັບກຳທາງສຽງສັງຄົມ.

✱ ໜ່ວຍງານທີ່ເຮັດວຽກທາງອ້ອມ ມີ:

- ສິລະປະວັນນະຄະດີ.
- ຮູບເງົາ.
- ນັກປະພັນ.
- ນັກປະດິດຄິດແຕ່ງ...

**✱ ສຳລັບຢູ່ຂັ້ນທ້ອງຖິ່ນ:** ແມ່ນຄະນະໂຄສະນາອົບຮົມແຂວງ (ຂະແໜງອົບຮົມ, ຂະແໜງໂຄສະນາ, ພະແນກຖະແຫຼງຂ່າວ-ວັດທະນະທຳ, ໜ່ວຍງານຄົ້ນຄວ້າເກັບກຳທາງສຽງສັງຄົມ). ສະນັ້ນ, ບັນດາກົມດັ່ງກ່າວ ຈຶ່ງເຮັດໜ້າທີ່ຂອງເຂົາເຈົ້າ ໃນຖານະທີ່ເປັນເສນາທິການດ້ານວຽກ ດັ່ງນີ້:

**①. ກົມໂຄສະນາ:** ແມ່ນເປັນຜູ້ທີ່ເຮັດວຽກໂຄສະນາຂອງພັກ ຊຶ່ງປະກອບມີໜ້າວຽກ: ວຽກງານປາຖະກະຖາ, ວຽກງານໂຄສະນາໂດຍຜ່ານສື່ມວນຊົນ, ໂຄສະນາສື່ເອເລັກໂຕຼນິກ, ໂທລະພາບ, ສື່ສິ່ງພິມ. ຊຶ່ງບັນດາໜ້າວຽກນັ້ນ ໄດ້ເຮັດໜ້າທີ່ຕາມພາລະບົດບາດທີ່ໄດ້ກຳນົດໄວ້ ເຊັ່ນ: ການໂຄສະນາ-ປາຖະກະຖາ ເປັນເງື່ອນໄຂເບື້ອງຕົ້ນ ຮັບປະກັນໃຫ້ແກ່ການປະຕິບັດທຸກໜ້າທີ່ການເມືອງຂອງພັກ. ການປາຖະກະຖາ ແມ່ນຮູບການໜຶ່ງຂອງວຽກງານໂຄສະນາ ຊຶ່ງແມ່ນພາກສ່ວນປະຈັນບານຂອງວຽກງານແນວຄິດ ຄື:

- ໂຄສະນາເຜີຍແຜ່, ແນະນຳ, ອະທິບາຍທິດສະດີມາກ-ເລນິນ, ແນວທາງ, ນະໂຍບາຍ, ແຜນນະໂຍບາຍຂອງພັກ, ກົດໝາຍຂອງລັດ ໃຫ້ໝົດທຸກຄົນຮັບຮູ້, ເຂົ້າໃຈແຈ້ງ, ຕື່ນຕົວປະຕິບັດໜ້າທີ່ວຽກງານຢ່າງຫ້າວຫັນ, ມີຄວາມຮັບຜິດຊອບ, ມີຫົວຄິດປະດິດສ້າງ ແລະ ເກີດໝາກຜົນ.

- ໂຄສະນາເຜີຍແຜ່, ອະທິບາຍ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພົວພັນຮ່ວມມືສາກົນ, ສະພາບການຂອງໂລກ ລົງເຖິງເປົ້າໝາຍຕ່າງໆ ໄດ້ຢ່າງວ່ອງໄວ ແລະ ທົ່ວເຖິງ.

- ໂຄສະນາເປັນວຽກຖະແຫຼງຂ່າວ ແລະ ແຈ້ງຂ່າວທາງການ ກ່ຽວກັບສະຖານະການທັງພາຍໃນ ແລະ ຕ່າງປະເທດ ໃນຖານະເປັນກະບອກສຽງຂອງພັກ-ລັດ ເພື່ອຊີ້ໃຫ້ເຫັນ ແລະ ຄາດຄະເນທ່າອ່ຽງຂະຫຍາຍຕົວຂອງສະພາບການ ເພື່ອກຳນົດທິດທາງຊີ້ນຳຢ່າງຖືກຕ້ອງ ແລະ ຊັດເຈນ, ເພື່ອຊີ້ນຳແນວຄິດ ແລະ ການເຄື່ອນໄຫວຂອງຄົນໃນທົ່ວສັງຄົມ ໃຫ້ໄປຕາມທິດທາງ ແລະ ທັດສະນະຂອງພັກໃນແຕ່ລະໄລຍະ; ຕໍ່ສູ້ຕ້ານທຸກກົນອຸບາຍຫັນປ່ຽນໂດຍສັນຕິ, ຖ້ອຍທຳນອງໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີຂອງອິທິກຳລັງປໍລະປັກ ແລະ ພວກຄົນບໍ່ດີ.

- ເປັນເຈົ້າການສະກັດກັ້ນທຸກປະກົດການຫຍໍ້ທໍ້ ທາງດ້ານແນວຄິດ ແລະ ການກະທຳຝືນປະຕິວັດ, ແນວຄິດ-ຈິດຕະສາດ ແລະ ຮີດຄອງປະເພນີ ອັນຫຼ້າຫຼັງໃນສັງຄົມ.

**②. ກົມອົບຮົມ:** ວຽກງານອົບຮົມ ແມ່ນພາກສ່ວນໜຶ່ງ ທີ່ເປັນວຽກໃຈກາງ ຢູ່ໃນວຽກງານໂຄສະນາອົບຮົມ ເປັນຕົ້ນ: ການສ້າງເອກະສານ, ການປັບປຸງເອກະສານ ແລະ ການຈັດຝຶກອົບຮົມໃຫ້ແຕ່ລະເປົ້າໝາຍ. ສະນັ້ນ, ກົມອົບຮົມ ຈຶ່ງເຮັດໜ້າທີ່ເປັນເສນາທິການດ້ານວຽກ ດັ່ງນີ້:

- ອົບຮົມບັນດາຫຼັກມູນພື້ນຖານ ທິດສະດີມາກ-ເລນິນ, ມະຕິກອງປະຊຸມໃຫຍ່ຂອງພັກ, ມະຕິຂອງຄະນະບໍລິຫານງານສູນກາງພັກ ແລະ ບັນດາມະຕິຂອງຄະນະພັກກະຊວງ, ອົງການ, ນະຄອນຫຼວງ, ແຂວງ ແລະ ເມືອງ-ນະຄອນ.

- ອົບຮົມແນວທາງນະໂຍບາຍຂອງພັກ, ຂອງລັດ, ບັນດາແຜນງານ, ໂຄງການຂອງຂະແໜງການ, ທ້ອງຖິ່ນ ກ່ຽວກັບການພັດທະນາໃນດ້ານຕ່າງໆ ເຊັ່ນ: ການເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

- ອົບຮົມສະພາບການ ແລະ ບັນຫາພົ້ນເດັ່ນ ທີ່ເກີດຂຶ້ນຢູ່ພາຍໃນ ແລະ ຕ່າງປະເທດ, ບັນຫາປະກົດການຫຍໍ້ທໍ້ຕ່າງໆ ໂດຍມີທິດຊີ້ນໍາ ແລະ ຕອບຕ້ານ ທັດສະນະທີ່ຜິດພາດຢ່າງທັນການ.

- ອົບຮົມແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ, ຂອງທ້ອງຖິ່ນ, ເຜີຍແຜ່ຄວາມຮູ້ເຕັກໂນໂລຊີໃໝ່, ວິທີການທໍາມາຫາກິນທີ່ກ້າວໜ້າ ເພື່ອແກ້ໄຂຄວາມທຸກຍາກ ແລະ ການຄຸ້ມຄອງເສດຖະກິດ-ສັງຄົມ.

- ອົບຮົມໃນການປົກປັກຮັກສາ ແລະ ເສີມຂະຫຍາຍວັດທະນະທໍາອັນດີງາມ ຂອງຊາດ, ຂອງທ້ອງຖິ່ນ ແລະ ຂອງບັນດາເຜົ່າ; ປົກປັກຮັກສາ ແລະ ອະນຸລັກສິ່ງແວດລ້ອມທີ່ຖືກຕ້ອງ.

**③. ວຽກງານເກັບກໍາທາງສຽງສັງຄົມ:** ເຮັດໜ້າທີ່ໃນການເກັບກໍາແນວຄິດຂອງຄົນ ທີ່ມີຕໍ່ການນໍາພາຂອງພັກ (ທາງບວກ, ທາງລົບ) ແລ້ວນໍາມາຄົ້ນຄວ້າ, ວິເຄາະ, ວິໄຈ ຢ່າງເລິກເຊິ່ງ ເພື່ອສະເໜີທາງອອກ, ວິທີແກ້ໄຂໃຫ້ແກ່ຂັ້ນເທິງ.

- ເປັນເຈົ້າການຄົ້ນຄວ້າ, ເກັບກໍາ, ສັງລວມ, ວິເຄາະທາງສຽງສັງຄົມທີ່ຕັ້ງໜ້າ ແລະ ຫຍໍ້ທໍ້ ເພື່ອກໍານົດທິດທາງ, ວິທີການ ແລະ ມາດຕະການແກ້ໄຂ ໃຫ້ຖືກຕ້ອງ, ສອດຄ່ອງ ແລະ ແທດຕົວຈິງ.

- ຕິດຕາມ, ເກັບກໍາ, ສະຫຼຸບສັງລວມ ບັນດາປະກົດການຫຍໍ້ທໍ້ທີ່ພົ້ນເດັ່ນເກີດຂຶ້ນໃນສັງຄົມ ລາຍງານຂັ້ນເທິງ ເພື່ອມີວິທີການແກ້ໄຂທັນການ.

- ຕິດຕາມບັນດາປະກົດການຫຍໍ້ທໍ້ ແລະ ຖ້ອຍທໍານອງບິດເບືອນ ຂອງພວກຄົນບໍ່ດີ ທີ່ມີຕໍ່ແນວທາງນະໂຍບາຍຂອງພັກ, ການຄຸ້ມຄອງຂອງລັດ ແລະ ຕໍ່ຂະແໜງການຂອງຕົນ ລາຍງານໃຫ້ຄະນະພັກ, ຄະນະນໍາຂອງຕົນ ແລະ ຄະນະໂຄສະນາອົບຮົມສູນກາງພັກ.

- ດໍາເນີນການຢັ່ງຫາງສຽງສັງຄົມ ທີ່ມີຕໍ່ການນໍາພາຂອງຄະນະພັກ, ອໍານາດການປົກຄອງ ເພື່ອບູລະນະແນວທາງນະໂຍບາຍ, ນະໂຍບາຍຂອງຄະນະພັກຂັ້ນຕ່າງໆ ພ້ອມກັນນັ້ນ, ຍັງເປັນການທາບທາມເບິ່ງຫາງສຽງ ແລະ ຄະແນນນິຍົມຕໍ່ການນໍາພາຂອງຄະນະພັກ, ຄະນະນໍາ ໃນແຕ່ລະບ່ອນຕື່ມອີກ.

- ຫຼັງຈາກເກັບກໍາສະພາບແນວຄິດຂອງເປົ້າໝາຍໄດ້ແລ້ວ ແມ່ນກະກຽມທາງດ້ານເນື້ອໃນ ໃຫ້ຄະນະພັກ, ຄະນະນໍາ ເພື່ອໃຊ້ເຂົ້າໃນການສຶກສາອົບຮົມນໍາພາແນວຄິດ ຂອງພະນັກງານ, ສະມາຊິກພັກ ແລະ ປະຊາຊົນ,

ປະກອບສ່ວນເຂົ້າໃນການຕໍ່ສູ້ ຕ້ານກັບທັດສະນະທີ່ຜິດເຂວຂອງສັດຕູ.

**④. ສະພາທິດສະດີສູນກາງພັກ:** ເຮັດໜ້າທີ່ໃນການໃຫ້ຄໍາປຶກສາ ແກ່ຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ກ່ຽວກັບການຄົ້ນຄວ້າທິດສະດີ ແລະ ສັງລວມພຶດຕິກໍາຂອງພັກ.

- ຄົ້ນຄວ້າ, ວິໄຈ ບັນຫາທິດສະດີການເມືອງ, ແນວຄິດ-ທິດສະດີຂອງພັກ ແລະ ວິທະຍາສາດສັງຄົມ ເພື່ອເປັນພື້ນຖານໃຫ້ແກ່ການກໍານົດ, ປັບປຸງ ແລະ ບູລະນະແນວທາງ, ນະໂຍບາຍຂອງພັກ ຕາມທິດກ້າວຂຶ້ນສັງຄົມນິຍົມ ຕາມການມອບໝາຍຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ຫຼື ຕາມການສະເໜີຂອງສະພາທິດສະດີສູນກາງພັກ.

- ຄົ້ນຄວ້າ, ສໍາມະນາຫົວຂໍ້ລະດັບຊາດ ກ່ຽວກັບທິດສະດີການເມືອງ, ການປົກຄອງ, ເສດຖະກິດ-ສັງຄົມ ແລະ ຂົງເຂດອື່ນໆ ເພື່ອຕອບສະໜອງໜ້າທີ່ການເມືອງຂອງພັກ ໃນແຕ່ລະໄລຍະ ຕາມການມອບໝາຍຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ຫຼື ຕາມການສະເໜີຂອງສະພາທິດສະດີສູນກາງພັກ.

- ພົວພັນກັບອົງການຄົ້ນຄວ້າ ຂອງບັນດາພັກການເມືອງ ເພື່ອນມິດຍຸດທະສາດ, ເພື່ອນຮ່ວມອຸດົມການ ແລະ ພັກກໍາອໍານາດທີ່ກ້າວໜ້າ ໃນທົ່ວໂລກ ເພື່ອຄົ້ນຄວ້າທິດສະດີ ຕາມການມອບໝາຍຂອງກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ຫຼື ຕາມການສະເໜີຂອງສະພາທິດສະດີສູນກາງພັກ.

## 2. ການພັດທະນາວຽກງານໂຄສະນາອົບຮົມ ບົນພື້ນຖານສ້າງຈິດໃຈເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່.

ການພັດທະນາວຽກງານໂຄສະນາອົບຮົມ ບົນພື້ນຖານສ້າງຈິດໃຈເອກະລາດ ເປັນເຈົ້າຕົນເອງ ແມ່ນເລັ່ງໃສ່ການພັດທະນາບັນດາວຽກຫຼັກດັ່ງກ່າວນີ້ ໃຫ້ມີຄວາມເຂັ້ມແຂງ, ສາມາດເຄື່ອນໄຫວໃຫ້ມີຄຸນນະພາບ. ສະນັ້ນ, ຈຶ່ງສຸມໃສ່ພັດທະນາວຽກງານຫຼັກ ດັ່ງນີ້:

**①. ວຽກງານໂຄສະນາ.**

- ການໂຄສະນາ-ປາຖະກະຖາ ຕ້ອງຕິດພັນສະໜິດແໜ້ນກັບໜ້າທີ່ການເມືອງຂອງພັກ ໃນແຕ່ລະໄລຍະ, ເສີມຂະຫຍາຍມານະຈິດປະຕິວັດ ແລະ ກໍາລັງແຮງສັງລວມ ເຂົ້າໃນການປະຕິບັດສອງໜ້າທີ່ຍຸດທະສາດ ໃຫ້ໄປຕາມແນວທາງປ່ຽນແປງໃໝ່ຂອງພັກ.

- ເນື້ອໃນຂອງເອກະສານປາຖະກະຖາຕ້ອງໃຫ້ຮັດກຸມ, ເລິກເຊິ່ງ; ສູນກາງວາງອອກແລ້ວ, ເວລາແຂວງ, ກະຊວງ, ອົງການ ນໍາໄປປາຖະກະຖາ ກໍຕ້ອງໄດ້ໝູນໃຊ້, ປັບປຸງໃຫ້ເຂົ້າກັບໜ້າວຽກທີ່ຕົນກໍາລັງດໍາເນີນການຢູ່ນັ້ນໂລດ; ຫຼີກເວັ້ນທີ່ສຸດ ແມ່ນສູນກາງເຮັດມາແນວໃດ ກໍເອົາທັງໝົດມາອ່ານສູ່ກັນຟັງ.

- ສໍາລັບຜູ້ທີ່ໄປເປັນຜູ້ປາຖະກະຖາ ກໍຕ້ອງໄດ້ເລືອກຜູ້ທີ່ມີບົດບາດ, ມີພອນສະຫວັນ, ມີລະດັບຄວາມຮູ້, ກໍາແໜ້ນແນວທາງໃນລະດັບອັນແນ່ນອນ.

- ຕ້ອງເຮັດຢ່າງເນື່ອງນິດລຽນຕິດ ແລະ ເປັນປະຈໍາ, ເຮັດຫຼາຍຫຼືບຫຼາຍຕ່າວ, ຫຼາຍຮູບຫຼາຍສີ ໂດຍສອດຄ່ອງກັບແຕ່ລະເປົ້າໝາຍ, ສົມທົບຢ່າງກົມກຽວ ລະຫວ່າງເນື້ອໃນ ແລະ ຮູບການ, ນໍາໃຊ້ທຸກພາຫະນະເພື່ອຮັບປະກັນຄວາມກະທັດຮັດ, ເຂົ້າໃຈງ່າຍ.

- ຕ້ອງຢູ່ໃນທ່າບຸກ, ທ່າເປັນເຈົ້າການ ແລະ ເຮັດວຽກງານປາຖະກະຖາ ໃຫ້ມີຊີວິດຊີວາກວ່າເກົ່າ, ມີການຄາດຄະເນລ່ວງໜ້າກ່ຽວກັບແງ່ລົບ, ແງ່ບວກ ເພື່ອມີທິດຊີ້ນຳ-ນຳພາ ແລະ ປັບປຸງແກ້ໄຂໃຫ້ທັນເວລາ.

- ຕ້ອງມີການຊີ້ນຳ-ນຳພາ ຈາກຄະນະພັກຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ຢ່າງໃກ້ຊິດ ທັງຮັບປະກັນຄວາມຄ່ອງແຄ້ວວ່ອງໄວ, ມີຄວາມນິ້ມນວນ, ແຫຼມຄົມ ແລະ ເດັດຂາດ, ມີຄວາມຊັດເຈນ, ຮັດກຸມ ແລະ ໜັກແໜ້ນ.

- ວຽກງານໂຄສະນາ-ປາຖະກະຖາ ແລະ ປຸກລະດົມ ແມ່ນວຽກງານຂອງທົ່ວປວງຊົນ. ສະນັ້ນ, ຕ້ອງຮູ້ນຳໃຊ້ກຳລັງແຮງສັງລວມຂອງການຈັດຕັ້ງຂອງພັກ, ຂອງລັດ, ຂອງມະຫາຊົນ ແລະ ການຈັດຕັ້ງສັງຄົມຕ່າງໆ ເຂົ້າຮ່ວມໃນວຽກງານໂຄສະນາ-ປາຖະກະຖາ; ຄົ້ນໃຫ້ພົບວຽກດີຄົນເດັ່ນ ເພື່ອຍົກເປັນແບບຢ່າງ ແລະ ຊອກໃຫ້ເຫັນສິ່ງຫຍໍ້ທໍ້ ເພື່ອຕຳນິວິຈານໃຫ້ທັນເວລາ.

**໒. ວຽກງານອົບຮົມ.**

- ການສ້າງ, ຂຽນ ແລະ ປັບປຸງເນື້ອໃນ ເອກະສານອົບຮົມຕ່າງໆ ໃຫ້ສອດຄ່ອງກັບແນວທາງ, ແຜນນະໂຍບາຍຂອງພັກໃນແຕ່ລະໄລຍະ (ການປັບປຸງເອກະສານ ຕ້ອງຖືເອົາລະດັບເປົ້າໝາຍເປັນຕົວກຳນົດ); ຕ້ອງສັ້ນ, ຮັດກຸມ, ຈະແຈ້ງ, ຄົບຖ້ວນ, ແທດຕົວຈິງ ແລະ ທົ່ວເຖິງທຸກເປົ້າໝາຍ.

- ເພີ່ມທະວີໃນການຂຽນເອກະສານອົບຮົມ ແລະ ຈັດຕັ້ງຊຸດຝຶກອົບຮົມ ຕ້ອງຮັບປະກັນລັກສະນະພັກ, ລັກສະນະວິທະຍາສາດ ແລະ ລັກສະນະຕໍ່ສູ້ ໃຫ້ແຂງແຮງກວ່າເກົ່າ (ຜ່ານມາລັກສະນະຕໍ່ສູ້ ບໍ່ທັນແຂງແຮງ).

- ຕ້ອງຍົກສູງຄຸນນະພາບຂອງຜູ້ບັນຍາຍເອກະສານອົບຮົມ, ຜູ້ບັນຍາຍເອກະສານອົບຮົມ ຕ້ອງເປັນຜູ້ຮູ້, ເຂົ້າໃຈ, ເຊື່ອມຊຶມ ແລະ ກຳແໜ້ນທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ນະໂຍບາຍ, ລະບຽບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ (ຜູ້ທີ່ເຮັດວຽກງານອົບຮົມ ຕ້ອງແມ່ນຜູ້ທີ່ໜັກແໜ້ນ, ເດັດຂາດບໍ່ອະນຸຍາດໃຫ້ຜູ້ບໍ່ກຳແໜ້ນແນວທາງໄປເຜີຍແຜ່ແນວທາງ).

- ການຈັດຕັ້ງອົບຮົມພະນັກງານ, ສະມາຊິກພັກ ແລະ ປະຊາຊົນຊັ້ນຄົນຕ່າງໆ ຕ້ອງຖືເອົາຄຸນນະພາບເປັນກົກ, ບໍ່ຄວນແລ່ນນຳແຕ່ປະລິມານ, ເວລາ ແລະ ງົບປະມານ, ຕ້ອງໄປຕາມຄຳແນະນຳຂອງການຈັດຕັ້ງຝຶກອົບຮົມ ຢ່າງເຂັ້ມງວດ.

- ການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງຊຸດຝຶກອົບຮົມ ຕ້ອງໂລ່ງລ່ຽນ, ຄ່ອງຕົວ ແລະ ໃຫ້ບັນລຸຄາດໝາຍ; ແບ່ງໜ້າທີ່, ແບ່ງຄວາມຮັບຜິດຊອບໃຫ້ໂຄສະນາອົບຮົມທ້ອງຖິ່ນ ຫຼື ພາກສ່ວນທີ່ກ່ຽວຂ້ອງຫຼາຍຂຶ້ນກວ່າເກົ່າ ແລະ ເປັນເຈົ້າການໃນການຈັດຕັ້ງຝຶກອົບຮົມດ້ວຍຕົນເອງ ໂດຍບໍ່ເອື່ອຍອີງໃສ່ແຕ່ຂັ້ນສູນກາງ ລົງໄປສົມທົບຈັດຕັ້ງຝຶກອົບຮົມ.

- ຕ້ອງເປັນເຈົ້າການພັດທະນາບຸກຄະລາກອນ ຜູ້ທີ່ເຮັດວຽກງານໂຄສະນາອົບຮົມໃຫ້ມີຄຸນນະພາບ, ສ້າງຜູ້ບັນຍາຍເອກະສານໃຫ້ມີຄວາມຊຳນິຊຳນານ ແລະ ເປັນມືອາຊີບ.

**③. ວຽກງານເກັບກຳທາງສຽງສັງຄົມ.**

- ພະນັກງານທີ່ເຮັດວຽກງານນີ້ ຕ້ອງມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນສູງ ແລະ ສາມາດຮັກສາຄວາມລັບໄດ້; ຕ້ອງມີລະດັບຄວາມຮູ້ກວ້າງຂວາງ, ກຳແໜ້ນແນວທາງ ນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ; ມີປະສົບການ, ມີຄວາມທຸ່ນທ່ຽງອົດທົນ, ພະຍາຍາມຊອກຮູ້ບົດຮຽນ ແລະ ມີມະນຸດສຳພັນດີ.

- ຕ້ອງມີຄວາມສາມາດກຳໄດ້ຂໍ້ມູນຂ່າວສານທັນເວລາ, ຄົ້ນຄວ້າ-ສັງລວມບັນຫາ, ວິໄຈ, ໄຈ້ແຍກ ບັນຫາຢ່າງພາວະວິໄສ ແລະ ລາຍງານຖືກຕ້ອງຕາມຄວາມຈິງ, ມີຄວາມສະດຸ້ງໄວ, ກ້າສະເໜີຄວາມຄິດຄວາມ ເຫັນ ເພື່ອໃຫ້ການນຳຕົກລົງ ຢ່າງຖືກຕ້ອງ ແລະ ຊັດເຈນ.

- ການເກັບກຳທາງສຽງສັງຄົມ ໃນດ້ານຕັ້ງໜ້າ ແລະ ດ້ານຫຍໍ້ທໍ້ຢູ່ໃນສັງຄົມ ຕ້ອງສ່ອງແສງອອກ ຄວາມເປັນຈິງ ແລະ ພາວະວິໄສ.

- ພາຍຫຼັງທີ່ໄດ້ຮັບທາງສຽງສັງຄົມ, ພະນັກງານທີ່ຮັບຜິດຊອບວຽກນີ້ ຕ້ອງນຳເອົາຂໍ້ມູນດັ່ງກ່າວມາຄົ້ນ ຄວ້າ, ວິເຄາະ, ວິໄຈ ຢ່າງເລິກເຊິ່ງ, ຊອກສະເໜີວິທີການແກ້ໄຂ ເພື່ອລາຍງານໃຫ້ຂັ້ນເທິງ ຮັບຮູ້ຢ່າງທັນການ; ພ້ອມກັນນີ້, ກໍຕ້ອງຊອກໃຫ້ເຫັນອັນໃດ ແມ່ນທາງສຽງຕົ້ນຕໍ, ອັນໃດແມ່ນຂ່າວລື ຢ່າງລະອຽດ, ເລິກເຊິ່ງ; ປະ ສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຕິດຕາມຊຸກຍູ້ການແກ້ໄຂບັນຫາຕົວຈິງ ໃຫ້ເປັນຮູບປະທຳ.

**④. ສະພາທິດສະດີສູນກາງພັກ.**

- ການປັບປຸງກົນໄກການເຄື່ອນໄຫວວຽກງານວິຊາສະເພາະ ແລະ ພື້ນຖານວັດຖຸເຕັກນິກ ໃຫ້ມີຄວາມ ຄ່ອງຕົວ ແລະ ທັນສະໄໝ ເພື່ອປະຕິບັດບົດບາດເສນາທິການຮັບໃຊ້ການເຄື່ອນໄຫວວຽກງານ ຂອງສະພາທິດ ສະດີສູນກາງພັກ ຢ່າງມີປະສິດທິຜົນສູງ.

- ເພີ່ມປະສິດທິພາບ ໃນການເຄື່ອນໄຫວວຽກງານຂອງສະພາທິດສະດີສູນກາງພັກ, ການຄົ້ນຄວ້າ, ວິໄຈ ແລະ ຕີລາຄາບັນຫາຕ່າງໆ ທີ່ຖືກມອບໝາຍຈາກກົມການເມືອງ, ຄະນະເລຂາທິການສູນກາງພັກ ໃຫ້ເລິກເຊິ່ງ ແລະ ແທດຕົວຈິງ, ການຈັດຕັ້ງ ແລະ ດຳເນີນກອງປະຊຸມສຳມະນາລະດັບຕ່າງໆ ຕ້ອງຮັບປະກັນດ້ານເນື້ອໃນ.

- ເອົາໃຈໃສ່ກໍ່ສ້າງພະນັກງານ-ລັດຖະກອນ, ນັກຄົ້ນຄວ້າທິດສະດີ, ນັກວິທະຍາສາດ, ນັກຄົ້ນຄວ້າໜຸ່ມ ຂອງສະພາທິດສະດີສູນກາງພັກ ເພື່ອຮັບໃຊ້ໃຫ້ແກ່ການຄົ້ນຄວ້າທິດສະດີ, ແນວທາງຂອງພັກ ເພື່ອຕອບສະ ໜອງໜ້າທີ່ການເມືອງຂອງພັກ ໃນແຕ່ລະໄລຍະ.

- ການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ການຮ່ວມມື ໃນການສະໜອງຂໍ້ມູນຂ່າວສານ ທີ່ຈຳເປັນ ແລະ ໃນການຈັດຕັ້ງປະຕິບັດໂຄງການຄົ້ນຄວ້າທິດສະດີ ຕ້ອງວ່ອງໄວ ແລະ ທັນການ.

- ເພີ່ມທະວີການພົວພັນ ກັບອົງການຄົ້ນຄວ້າທິດສະດີ ຂອງບັນດາພັກການເມືອງ ເພື່ອນມິດຍຸດທະ ສາດ, ເພື່ອນຮ່ວມອຸດົມການ ແລະ ພັກກຳອຳນາດທີ່ກ້າວໜ້າໃນທົ່ວໂລກ ຕາມທິດການພົວພັນ ແລະ ຮ່ວມມື ກັບຕ່າງປະເທດຂອງພັກ.

- ການກຳນົດໂຄງການຄົ້ນຄວ້າທິດສະດີລະດັບຊາດ ໃຫ້ໜ່ວຍງານທີ່ກ່ຽວຂ້ອງ ນຳໄປຈັດຕັ້ງປະຕິບັດ ຕ້ອງດຳເນີນການຊຸກຍູ້, ຕິດຕາມ, ກວດກາ ແລະ ໃຫ້ຄຳແນະນຳແກ່ເຈົ້າຂອງໂຄງການຄົ້ນຄວ້າ ເພື່ອຮັບປະກັນໃຫ້ຄົ້ນຄວ້າ ດຳເນີນໄປຢ່າງຖືກຕ້ອງກັບທິດທາງ, ເປົ້າໝາຍ ແລະ ຂັ້ນຕອນ ທີ່ກຳນົດໄວ້.

- ຍົກສູງການຄົ້ນຄວ້າ, ນຳສະເໜີ, ອະທິບາຍ, ໄຈ້ແຍກ ແລະ ຕອບແກ້ບັນຫາຕ່າງໆ ທີ່ເກີດຂຶ້ນໃໝ່ ຊຶ່ງພົວພັນເຖິງທັດສະນະ, ຄວາມຮັບຮູ້ທີ່ຜິດເຂວຂອງສັງຄົມຕໍ່ແນວທາງ, ນະໂຍບາຍຂອງພັກ.

**✱** ສ່ວນວຽກງານວາລະສານ, ຂໍ້ມູນຂ່າວສານ-ຝຶກອົບຮົມ, ກວດກາ, ຈັດຕັ້ງ-ພະນັກງານ ແລະ ວຽກງານຫ້ອງການ ເປັນວຽກງານປົ່ນອ້ອມ ທີ່ຊຸກຍູ້, ສົ່ງເສີມ ໃຫ້ວຽກງານໂຄສະນາອົບຮົມ ດຳເນີນໄປດ້ວຍຄວາມສະດວກ ແລະ ມີຜົນສຳເລັດ ກໍຕ້ອງເອົາໃຈໃສ່ພັດທະນາໃຫ້ສົມຄູ່.

## 3. ສ້າງຈິດໃຈເອກະລາດ ເປັນເຈົ້າຕົນເອງ ວຽກງານໂຄສະນາອົບຮົມ ໃນໄລຍະໃໝ່.

ສ້າງຈິດໃຈເອກະລາດ ເປັນເຈົ້າຕົນເອງ ວຽກງານໂຄສະນາອົບຮົມ ໃນໄລຍະໃໝ່ ແມ່ນການຍົກສູງສະຕິຊາດ, ເສີມຂະຫຍາຍສະຕິປັນຍາ, ກຳລັງແຮງ ແລະ ຄວາມສາມາດແຂ່ງຂັນຂອງຄົນ ເພື່ອຂຸດຄົ້ນທ່າແຮງບົ່ມຊ້ອນຂອງພະນັກງານ, ເນື້ອແທ້ ແມ່ນການຍົກສູງວຽກງານໂຄສະນາອົບຮົມ ໃນໄລຍະໃໝ່. ຢາກຍົກສູງຄຸນນະພາບ ແລະ ຖານະຂອງຜູ້ເຮັດວຽກງານນີ້ໄດ້ ກ່ອນອື່ນໝົດ ຕ້ອງຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ ກໍຄື ສະມາຊິກພັກ, ພະນັກງານ ທີ່ເຮັດວຽກງານໂຄສະນາອົບຮົມ ໃຫ້ມີຄຸນນະພາບ ແລະ ທຽບທັນກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນໄລຍະໃໝ່, ຕີຖອຍໃຫ້ໄດ້ຕໍ່ທັດສະນະສ່ວນຕົວທີ່ວ່າ: ໄດ້ມາຮັບຜິດຊອບວຽກງານໂຄສະນາອົບຮົມ ແມ່ນເປັນການຕົກໜ້າທີ່ຕຳແໜ່ງ ຫຼື ຖືກວິໄນ; ເກີດມີຄວາມຕໍ່າຄ້ອຍນ້ອຍໃຈ. ສະນັ້ນ, ການສ້າງຈິດໃຈເອກະລາດ ເປັນເຈົ້າຕົນເອງ ໃນວຽກງານໂຄສະນາອົບຮົມ ຕ້ອງເຮັດ ດັ່ງນີ້:

①. ເປັນເຈົ້າການ ທາງດ້ານການເມືອງ-ແນວຄິດ: ພະນັກງານ, ສະມາຊິກພັກ ຕ້ອງຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີທັດສະນະການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ຕໍ່ພັກ, ຕໍ່ລະບອບປະຊາທິປະໄຕ, ມີສະຕິຕື່ນຕົວເປັນເຈົ້າການເສີມຂະຫຍາຍສິດເປັນເຈົ້າຕົນເອງ, ມີມານະຈິດບຸກບືນຫ້າວຫັນ, ອົດທົນຜ່ານຜ່າຄວາມຫຍຸ້ງຍາກຕໍ່ອຸປະສັກ ແລະ ບັນຫາທີ່ເກີດຂຶ້ນ; ມີຄວາມອຸ່ນອ່ຽງຫຸ່ນທ່ຽງ, ບໍ່ຫວັ່ນໄຫວຄອນແຄນຕໍ່ສະພາບການທີ່ເກີດຂຶ້ນ ທັງພາຍໃນ ແລະ ພາຍນອກ.

②. ເປັນເຈົ້າການ ໃນການພັດທະນາຕົນເອງ: ສະມາຊິກພັກ, ພະນັກງານ ຕ້ອງຕັ້ງໜ້າຄົ້ນຄວ້າ, ຮໍ່າຮຽນ, ເຊື່ອມຊຶມທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ແນວທາງ, ແຜນນະໂຍບາຍຂອງພັກ, ມະຕິ, ຄຳສັ່ງຕ່າງໆ, ລະບຽບກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະໃຫ້ເລິກເຊິ່ງ ແລະ ກວ້າງຂວາງ; ພະນັກງານ, ສະມາຊິກພັກ ຕ້ອງເປັນຄົນເສຍສະຫຼະສູງ ແລະ ມີຈິດໃຈມັກ-ຮັກ ໃນວຽກງານໂຄສະນາອົບຮົມ, ຮູ້ຈັກຄົ້ນຄິດ, ຮູ້ຈັກສັງລວມບັນຫາ, ຂີດຂຽນ ແລະ ຮູ້ຈັກເວົ້າ (ບັນຍາຍເອກະສານ, ຮູ້ຈັກການໂຄສະນາ-ປາຖະກະຖາ) ຫ້າມຜູ້ທີ່ບໍ່ຮູ້ແນວທາງນະໂຍບາຍຂອງພັກ ຫຼື ຜູ້ທີ່ເສື່ອມຄຸນປ່ຽນທາດ ໄປໂຄສະນາສຶກສາອົບຮົມແນວທາງຂອງພັກ. ພ້ອມທັງຍົກລະດັບທາງດ້ານທິດສະດີ ແລະ ວິຊາສະເພາະໃຫ້ສູງຂຶ້ນ ເພື່ອປະກອບສ່ວນໃນໜ້າທີ່ວຽກງານ ແລະ ເຮັດໃຫ້ວຽກງານໂຄສະນາອົບຮົມ ມີຄຸນນະພາບໃໝ່.

③. ເປັນເຈົ້າການ ໃນການຈັດຕັ້ງຜັນຂະຫຍາຍແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ ຫັນມາເປັນແຜນການ, ໂຄງການວຽກງານລະອຽດຂອງຄະນະພັກ, ຂອງຂະແໜງການ ແລະ ທ້ອງຖິ່ນ ຂອງຕົນ; ພ້ອມທັງຮູ້ຈັດຕັ້ງເຜີຍແຜ່, ໂຄສະນາ ແລະ ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ເປົ້າໝາຍຕ່າງໆ ໄດ້ຮັບຮູ້, ເຂົ້າໃຈ, ເປັນເອກະພາບກັນ ແລະ ຕື່ນຕົວຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ໃຫ້ປະກົດຜົນເປັນຈິງ.

④. ເປັນເຈົ້າການ ຕໍ່ການຈັດຕັ້ງ ຫຼື ມີສະຕິຕໍ່ການຈັດຕັ້ງ: ພະນັກງານ, ສະມາຊິກພັກ ຕ້ອງມີສະຕິເຄົາລົບກົດໝາຍ, ລະບຽບການຕ່າງໆ ເປັນແບບຢ່າງທີ່ດີ ໃນການເຄົາລົບ ແລະ ປະຕິບັດລະບຽບກົດໝາຍ, ບໍ່ເຮັດໃນສິ່ງທີ່ລະເມີດກົດໝາຍ ແລະ ຮູ້ຈຳແນກມິດ-ສັດຕູ ຢ່າງຈະແຈ້ງ, ມີສະຕິລະວັງຕົວຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິ ຂອງອິທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ຫວັງດີ ທີ່ສ້າງຄວາມປັ່ນປ່ວນ, ໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີຕໍ່ແນວທາງນະໂຍບາຍຂອງພັກ-ລັດ ແລະ ພ້ອມທັງເປັນເຈົ້າການສະກັດກັ້ນ, ຕອບໂຕ້, ຊີ້ແຈງ ແລະ ອະທິບາຍໃຫ້ສັງຄົມຮັບຮູ້, ເຂົ້າໃຈ ຖືກຕ້ອງ ແລະ ທັນການ.

⑤. ເປັນເຈົ້າການ ເດັດດ່ຽວຕ້ານປະກົດການຫຍໍ້ທໍ້ຕ່າງໆ: ແນວຄິດຫຼາຍພັກ, ຫຼາຍເຄົ້າ, ຈຸ້ມເຈື້ອເຊື້ອສາຍ, ກຸ່ມກ້ອນພັກພວກ, ເອກະຊົນ, ພະຍາດອາຍາສິດ, ສວຍໂອກາດ, ສວຍໃຊ້ໜ້າທີ່ຕຳແໜ່ງ, ລ່ວງລະເມີດສິດເປັນເຈົ້າຂອງປະຊາຊົນ ແລະ ບໍ່ປະຕິບັດລະບຽບກົດໝາຍ, ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ ທີ່ຕົນຮັບຜິດຊອບ.

⑥. ເປັນເຈົ້າການ ແລະ ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍສູງ: ຕ້ອງຍົກສູງຄວາມຮັບຜິດຊອບການເມືອງ, ມີຄວາມຫ້າວຫັນ, ເປັນເຈົ້າການປະຕິບັດໜ້າທີ່ວຽກງານ ດ້ວຍຄວາມປະດິດສ້າງ, ມີຄວາມກ້າຫານຮັບຜິດຊອບຕໍ່ຜົນໄດ້, ຜົນເສຍ ໃນການປະຕິບັດໜ້າທີ່ວຽກງານ; ບໍ່ເລືອກວຽກ, ການຈັດຕັ້ງມອບໝາຍຫຍັງໃຫ້ ກໍຕ້ອງຕັດສິນໃຈເຮັດໃຫ້ສຳເລັດ ແລະ ເຮັດວຽກມີປະສິດທິຜົນສູງ.

⑦. ເປັນເຈົ້າການ ໃນການສ້າງເສດຖະກິດ: ຕ້ອງເປັນເຈົ້າການໃນການຄົ້ນຄວ້າ, ຂຸດຄົ້ນຊອກຫາທ່າແຮງບົ່ມຊ້ອນ, ແຫຼ່ງທຶນ ເພື່ອມາຊ່ວຍຖົມງົບປະມານຂອງລັດ, ບໍ່ເອື່ອຍອີງໃສ່ ງົບປະມານຂອງລັດພຽງຢ່າງດຽວ.

## III. ທິດທາງໃນການສ້າງຈິດໃຈເອກະລາດ ເປັນເຈົ້າຕົນເອງ ວຽກງານໂຄສະນາອົບຮົມ ໃນໄລຍະໃໝ່.

ເພື່ອພັດທະນາວຽກງານໂຄສະນາອົບຮົມ ບົນຈິດໃຈສ້າງຈິດໃຈເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ແຕ່ສູນກາງຮອດທ້ອງຖິ່ນ ຕ້ອງໄດ້ຕັດສິນໃຈ ໃນການນຳໃຊ້ທ່າແຮງຂອງແຕ່ລະບ່ອນເປັນກຳລັງແຮງຊຸກດັນ ເຮັດໃຫ້ການພັດທະນາວຽກງານໂຄສະນາອົບຮົມ ໄປສູ່ຄຸນນະພາບໃໝ່. ສະນັ້ນ, ພວກເຮົາ ຕ້ອງກຳແໜ້ນທິດທາງ ໃນການປັບປຸງບາງດ້ານ ດັ່ງນີ້:

### 1. ຕ້ອງປັບປຸງດ້ານກົງຈັກການຈັດຕັ້ງ.

①. ປັບປຸງບົດບາດ ຂອງຄະນະໂຄສະນາອົບຮົມສູນກາງພັກ, ຂອງບັນດາກົມ ແລະ ຄະນະໂຄສະນາອົບຮົມແຕ່ລະຂັ້ນ ໃຫ້ສອດຄ່ອງກັບໜ້າທີ່ການເມືອງໃນແຕ່ລະໄລຍະ, ປັບປຸງກົງຈັກການຈັດຕັ້ງໃຫ້ກະທັດຮັດ, ເປັນລະບົບຄົບຊຸດ ແລະ ມີປະສິດທິຜົນ.

②. ປັບປຸງການຈັດຕັ້ງ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ພະນັກງານ-ລັດຖະກອນ ຄະນະໂຄສະນາອົບຮົມສູນກາງພັກ ໃຫ້ມີຈຳນວນຫຼຸດລົງ ຫຼື ໃຫ້ເໝາະສົມກັບສະພາບຕົວຈິງ, ແຕ່ຄຸນນະພາບເພີ່ມຂຶ້ນ ສາມາດປະຕິບັດໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍ ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

③. ປັບປຸງກົງຈັກການຈັດຕັ້ງ ແລະ ການກຳນົດຕຳແໜ່ງງານ ຂອງຄະນະໂຄສະນາອົບຮົມສູນກາງພັກ, ຄະນະໂຄສະນາອົບຮົມທ້ອງຖິ່ນ ໃຫ້ຕິດພັນກັບການຄົ້ນຄວ້າປັບປຸງກົນໄກ, ແບບແຜນວິທີເຮັດວຽກ ແລະ ວຽກພົວພັນປະສານງານ ລະຫວ່າງຄະນະໂຄສະນາອົບຮົມສູນກາງພັກ ກັບຄະນະໂຄສະນາອົບຮົມບັນດາແຂວງ, ເມືອງ-ນະຄອນ ໃຫ້ເປັນລະບົບໂລ່ງລ່ຽນ; ຫຼີກເວັ້ນການກ້າວກ່າຍ, ຊໍ້າຊ້ອນວຽກງານເຊິ່ງກັນ ແລະ ກັນ; ເດັດດ່ຽວແກ້ໄຂການມີຫຼາຍຂັ້ນ-ຫຼາຍຂອດ ບໍລິຫານທີ່ບໍ່ຈຳເປັນ ໃນວຽກງານອັນດຽວກັນ.

④. ວຽກງານສື່ມວນຊົນ ເປັນວຽກໜຶ່ງທີ່ສຳຄັນຂອງພັກ, ເປັນພາຫະນະ ແລະ ເຄື່ອງມືໂຄສະນາ, ສຶກສາອົບຮົມ ແລະ ປຸກລະດົມ ປະຊາຊົນລາວບັນດາເຜົ່າ ຮັບຮູ້, ເຂົ້າໃຈ ແນວທາງນະໂຍບາຍຂອງພັກ, ບັນດາມະຕິ, ຄຳສັ່ງຕ່າງໆ... ການໂອນວຽກງານສື່ມວນຊົນ (ວຽກຖະແຫຼງຂ່າວ) ມາຂຶ້ນກັບ ຄະນະໂຄສະນາອົບຮົມສູນກາງພັກ ຕາມມະຕິ ຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການປັບປຸງກົງຈັກການຈັດຕັ້ງ ສະບັບເລກທີ 03/ຄບສພ, ລົງວັນທີ 12 ມີນາ 2025 ເພື່ອໃຫ້ສອດຄ່ອງກັບແນວທາງຂອງພັກໃຫ້ກະທັດຮັດ, ໂລ່ງລຽນ, ມີປະສິດທິດພາບ ແລະ ເຂັ້ມແຂງ.

**2. ຕ້ອງປັບປຸງດ້ານບຸກຄະລາກອນ.**

ບຸກຄະລາກອນທີ່ຈະມາເຮັດວຽກງານໂຄສະນາອົບຮົມ ຕ້ອງມີຖານະທີ່ສົມຄູ່ກັບກັບວຽກນີ້ ໝາຍຄວາມວ່າ ຕ້ອງເອົາຜູ້ທີ່ມີຄວາມຮູ້ຕໍ່ກັບແນວທາງນະໂຍບາຍຂອງພັກ ໃນລະດັບທີ່ແນ່ນອນ, ສາມາດນຳເອົາແນວທາງໄປໂຄສະນາ, ອົບຮົມ ໃຫ້ຜູ້ອື່ນຮັບຮູ້, ເຂົ້າໃຈນຳໄດ້. ສະນັ້ນ, ຈຶ່ງຄວນເອົາໃຈໃສ່ ດັ່ງນີ້:

①. ຕ້ອງເປັນເຈົ້າການພັດທະນາບຸກຄະລາກອນ ກໍຄື ພະນັກງານ, ສະມາຊິກພັກ ພາຍໃນຂອງຕົນ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງທາງດ້ານການເມືອງ, ແນວຄິດ, ມີສະຕິຕໍ່ການຈັດຕັ້ງ ແລະ ມີລະບຽບແບບແຜນໃນການເຮັດວຽກງານ ສິ່ງສຳຄັນພະນັກງານຕ້ອງກຳແໜ້ນແນວທາງ, ແຜນນະໂຍບາຍຂອງພັກ, ມະຕິ, ຄຳສັ່ງ, ກົດລະບຽບພັກ ແລະ ລະບຽບກົດໝາຍຂອງລັດ ເພື່ອເຮັດໃຫ້ວຽກງານໂຄສະນາອົບຮົມມີບາດກ້າວທີ່ໃໝ່ຂຶ້ນ.

②. ເພີ່ມທະວີການຊີ້ນຳ-ນຳພາ ນັບແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ຕ້ອງສ້າງ ແລະ ປະຕິບັດແຜນກຳນົດພະນັກງານນຳພາ-ຄຸ້ມຄອງ, ເອົາໃຈໃສ່ໃນການກໍ່ສ້າງ-ບຳລຸງພະນັກງານ ຕາມທິດຫັນເປັນໜຸ່ມ ແລະ ຮັບປະກັນລັກສະນະສືບທອດ ທີ່ໜັກແໜ້ນ, ມີຄວາມຊຳນານງານດ້ານວິຊາສະເພາະ; ການສ້າງພະນັກງານ ຕ້ອງສ້າງພະນັກງານໃຫ້ໄດ້ 3 ຮຸ່ນ, ເພດ, ເຜົ່າ ຢ່າງສົມເຫດ-ສົມຜົນ, ແຕ່ພະນັກງານຮຸ່ນກາງ ແລະ ຮຸ່ນໜຸ່ມແໜ້ນຕ້ອງໄດ້ກວມເອົາອັດຕາສ່ວນຫຼາຍ.

③. ນຳໃຊ້ກຳລັງແຮງສັງລວມຂອງທຸກພາກສ່ວນ ເຂົ້າຮ່ວມໃນວຽກງານໂຄສະນາສຶກສາອົບຮົມ ໃຫ້ກວ້າງຂວາງເລິກເຊິ່ງ ຊຶ່ງເປັນໜ້າທີ່ຂອງຄະນະພັກທຸກຂັ້ນ, ສະມາຊິກພັກທຸກສະຫາຍ. ສະນັ້ນ, ທຸກພາກສ່ວນ,

ຂະແໜງການ, ທ້ອງຖິ່ນ ແລະ ປະຊາຊົນ ຕ້ອງໄດ້ມີສ່ວນຮ່ວມ ແລະ ຖືເອົາວຽກງານໂຄສະນາສຶກສາອົບຮົມ ເປັນວຽກທີ່ຕ້ອງເຮັດກ່ອນ ເພື່ອສ້າງພື້ນຖານຄວາມຮັບຮູ້, ເຂົ້າໃຈເປັນເອກະພາບກັບແນວທາງ ແລະ ການກະທຳ.

④. ພະນັກງານ-ລັດຖະກອນ ຕ້ອງມີມາດຕະຖານເງື່ອນໄຂ, ມີຄວາມຮູ້, ຄວາມສາມາດ, ວິຊາສະເພາະ, ມີຄຸນທາດການເມືອງ, ມີຄຸນສົມບັດສິນທຳປະຕິວັດ ແລະ ສຸຂະພາບແຂງແຮງ; ກໍ່ສ້າງ-ບຳລຸງຍົກລະດັບຂອງພະນັກງານ ທີ່ເຮັດວຽກງານໂຄສະນາອົບຮົມໃຫ້ເປັນລະບົບ ຕໍ່ເນື່ອງ ດ້ວຍການສົ່ງໄປຍົກລະດັບຢູ່ພາຍໃນ ແລະ ຕ່າງປະເທດ, ສົມທົບລະຫວ່າງການບຳລຸງຍົກລະດັບທິດສະດີ, ວິຊາສະເພາະ ກັບການນຳໃຊ້ເຂົ້າໃນວຽກງານຕົວຈິງ; ພ້ອມກັນນີ້ ພະນັກງານທີ່ເຮັດວຽກງານໂຄສະນາອົບຮົມ ກໍຕ້ອງເປັນເຈົ້າການບຸກບືນຄົ້ນຄວ້າຮ່ຳຮຽນ ຍົກສູງລະດັບຄວາມຮູ້, ຄວາມສາມາດຂອງຕົນເອງໃຫ້ຮອບດ້ານ ເພື່ອຕອບສະໜອງກັບການເລັ່ງທວງຂອງວຽກງານໂຄສະນາສຶກສາອົບຮົມ ໃນໄລຍະໃໝ່.

⑤. ສ້າງແຜນກຳນົດພະນັກງານ ໃຫ້ເປັນລະບົບຄົບຊຸດ ແລະ ຕິດພັນກັບແຜນບຳລຸງ-ກໍ່ສ້າງໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງ ພ້ອມທັງມີຄວາມຕັດສິນໃຈສູງ ສ້າງຖັນແຖວພະນັກງານໜຸ່ມແໜ້ນກະກຽມເປັນພະນັກງານຮຸ່ນສືບທອດພາລະກິດປະຕິວັດ ຕາມທິດຫັນເປັນໜຸ່ມໃຫ້ເປັນຈິງ ແລະ ຖືເອົາການສ້າງພະນັກງານກັບທີ່ ທີ່ເຮັດວຽກງານຕົວຈິງ ຢູ່ຄະນະໂຄສະນາອົບຮົມສູນກາງພັກ, ຄະນະໂຄສະນາອົບຮົມທ້ອງຖິ່ນເປັນສຳຄັນ.

⑥. ການຈັດວາງ, ສັບຊ້ອນບຸກຄະລາກອນ ຜູ້ທີ່ເຮັດວຽກງານການເມືອງ-ແນວຄິດ ກໍຄື ວຽກງານໂຄສະນາອົບຮົມ ຕ້ອງສົມຄູ່ກັບຖານະ, ບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງໜ້າທີ່ວຽກງານ ເພາະວ່າພະນັກງານເປັນປັດໄຈຕັດສິນຜົນໄດ້, ຜົນເສຍ ໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ; ຢາກສ້າງຈິດໃຈເອກະລາດ ໃນວຽກງານໂຄສະນາອົບຮົມໄດ້ ຕ້ອງໃຫ້ຄວາມສຳຄັນໃນການຈັດວາງ, ສັບຊ້ອນບຸກຄະລາກອນ ທີ່ເປັນຫົວຈັກຫຼັກແຫຼ່ງ ເຂົ້າໃນວຽກນີ້ ເພື່ອຊີ້ນຳ-ນຳພາ ໃຫ້ມີຄຸນນະພາບ ແລະ ສັບຊ້ອນຈັດວາງພະນັກງານໃຫ້ຖືກຕ້ອງ, ເໝາະສົມກັບຄວາມຮູ້, ຄວາມສາມາດຕົວຈິງ.

### 3. ຕ້ອງປັບປຸງດ້ານແບບແຜນວິທີເຮັດວຽກ ໃຫ້ສອດຄ່ອງກັບສະພາບການໃໝ່.

①. ການຫັນປ່ຽນແບບແຜນວິທີເຮັດວຽກ ໃນໄລຍະໃໝ່ ຂອງຄະນະພັກ, ຄະນະນຳແຕ່ລະຂັ້ນ ນັບແຕ່ສູນກາງຮອດທ້ອງຖິ່ນ ແມ່ນຍົກສູງຄວາມສາມາດໃນການນຳພາ ແລະ ຄວາມຮັບຜິດຊອບຂອງຕົນ ໂດຍເປັນເຈົ້າການຫັນເອົາມະຕິ, ຄຳສັ່ງຕ່າງໆ ມາເປັນແຜນການ, ໂຄງການຂອງຂະແໜງການ ແລະ ທ້ອງຖິ່ນ ຕາມທ່າແຮງ ແລະ ຈຸດພິເສດຂອງຕົນ ສູ່ການປະຕິບັດຕົວຈິງ ທີ່ມີປະສິດທິພາບ, ປະສິດທິຜົນ, ບັນລຸຕາມຄາດໝາຍທີ່ວາງໄວ້.

②. ດັດປັບການບໍລິຫານພາຍໃນພັກ, ແກ້ໄຂຄວາມຫຍຸ້ງຍາກຂອງລະບອບລະບຽບການ ທີ່ບໍ່ສອດຄ່ອງ, ຫຼຸດຜ່ອນການການປະຊຸມຫຼາຍ ຖືເອົາການເຮັດຕົວຈິງ ເປັນປັດໄຈຕັດສິນ. ພ້ອມກັນນັ້ນ, ກໍປັບປຸງກົນໄກ, ລະບອບ, ລະບຽບການເຄື່ອນໄຫວທີ່ມັນອັດຕັນໃຫ້ຕົກໄປ ບົນຈິດໃຈ 4 ບຸກທະລຸ; ນຳໃຊ້ອຸປະກອນທີ່ທັນສະໄໝ ເຂົ້າໃນການເຮັດວຽກ ທີ່ຄຽງຄູ່ກັບການໃຫ້ຖັນແຖວລັດຖະກອນມີຈຳນວນໜ້ອຍລົງ ແຕ່ຄຸນນະພາບເພີ່ມຂຶ້ນ ແລະ ໃຊ້ຈ່າຍຢ່າງປະຢັດ.

**4. ຕ້ອງປັບປຸງງົບປະມານຄືນໃໝ່.**

①. ບົນພື້ນຖານສ້າງຈິດໃຈເອກະລາດ ເປັນເຈົ້າຕົນເອງ ໃນວຽກງານໂຄສະນາອົບຮົມ ໃນໄລຍະໃໝ່ ຄະນະໂຄສະນາອົບຮົມສູນກາງພັກ, ຄະນະໂຄສະນາອົບຮົມນະຄອນຫຼວງ, ແຂວງ ແລະ ເມືອງ-ນະຄອນ ເປັນເຈົ້າການໃນການຊີ້ແຈງ, ອະທິບາຍໃຫ້ການນຳໄດ້ຮັບຮູ້, ເຂົ້າໃຈໜ້າວຽກນີ້ ເພື່ອສະໜອງງົບປະມານໃຫ້ພຽງພໍ.

②. ສູນກາງພັກ (ກົມການເມືອງ, ຄະນະເລຂາທິການສູນກາງພັກ), ການນຳຂອງແຂວງ, ຂອງເມືອງ-ນະຄອນ ຕ້ອງເພີ່ມຄວາມເອົາໃຈໃສ່ຕໍ່ກັບວຽກງານໂຄສະນາອົບຮົມຂອງພັກ, ເຫັນໄດ້ຄວາມໝາຍສຳຄັນຂອງວຽກງານນີ້ ໃຫ້ສູງ ແລະ ໃຫ້ຖືວ່າ ວຽກງານໂຄສະນາອົບຮົມຂອງພັກ ແມ່ນວຽກຂອງສະຫາຍເລຂາພັກ ຮັບຜິດຊອບໂດຍກົງ, ຖ້າເຮັດວຽກງານໂຄສະນາອົບຮົມໄດ້ດີ ບົດບາດການນຳພາຂອງຕົນກໍຍິ່ງດີຂຶ້ນ.

③. ຂຶ້ນແຜນງົບປະມານໃຫ້ແທດຕົວຈິງກັບວຽກງານ ແລະ ການໃຊ້ຈ່າຍງົບປະມານ ໃຫ້ຖືກກັບເປົ້າໝາຍ ຕາມສະພາບຄວາມເປັນຈິງ ບົນຈິດໃຈປະຢັດ ແລະ ຮັບປະກັນ ໃຫ້ມີປະສິດທິຜົນສູງ.

④. ເພີ່ມງົບປະມານ, ພາຫະນະ ແລະ ພື້ນຖານວັດຖຸເຕັກນິກ ໃຫ້ພຽງພໍກັບຄວາມຕ້ອງການຂອງວຽກງານຕົວຈິງ ໃນໄລຍະໃໝ່ ແລະ ທັນກຳນົດເວລາ ແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານໂຄສະນາອົບຮົມດຳເນີນໄປຢ່າງຄ່ອງຕົວ, ກວ້າງຂວາງ, ທົ່ວເຖິງຮາກຖານປະຊາຊົນ ແລະ ບັນລຸຕາມແຜນການທີ່ວາງໄວ້.

**IV. ວິທີການຈັດຕັ້ງປະຕິບັດ.**

1. ຄະນະພັກ ຄະນະໂຄສະນາອົບຮົມສູນກາງພັກ ນຳພາຈັດຕັ້ງຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນເນື້ອໃນຈິດໃຈ ເອກະສານສະບັບນີ້ ໃຫ້ທົ່ວເຖິງ, ເລິກເຊິ່ງ; ຍົກສູງຄວາມເປັນເຈົ້າໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ໃຫ້ເປັນລະອຽດ, ເຂົ້າສູ່ຂະບວນວຽກງານຕົວຈິງ ແລະ ເປັນຮູບປະທຳໂດຍໄວ.

2. ຄະນະໂຄສະນາອົບຮົມນະຄອນຫຼວງວຽງຈັນ, ຄະນະໂຄສະນາອົບຮົມບັນດາແຂວງ, ເມືອງ-ນະຄອນ ຫຼື ພາກສ່ວນກ່ຽວຂ້ອງ ທີ່ເປັນເສນາທິການໃຫ້ຄະນະພັກຂັ້ນຕົນ ເປັນເຈົ້າການນຳເອົາບັນດາເນື້ອໃນຈິດໃຈສຳຄັນ ຂອງເອກະສານສະບັບນີ້ ໄປຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ໃຫ້ສະມາຊິກພັກ, ພະນັກງານ ແລະ ປະຊາຊົນຂັ້ນຄົນຕ່າງໆ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ຮັບຮູ້, ເຂົ້າໃຈ ຢ່າງທົ່ວເຖິງ ແລະ ເຂົ້າຮ່ວມປະຕິບັດ ໃຫ້ເປັນຂະບວນການກວ້າງຂວາງ ແລະ ພ້ອມກັນສ້າງເປັນແຜນການ, ໂຄງການວຽກງານລະອຽດຂອງຄະນະພັກ, ຂອງຂະແໜງການ ແລະ ທ້ອງຖິ່ນຂອງຕົນ.

3. ຄະນະກົມ, ຫ້ອງການ, ວາລະສານ, ໜັງສືພິມປະຊາຊົນ ແລະ ສື່ມວນຊົນ ເປັນເຈົ້າການຫັນເອົາເນື້ອໃນເອກະສານສະບັບນີ້ ສ້າງເປັນແຜນການ, ໂຄງການວຽກງານລະອຽດຂອງຕົນ ແລະ ພ້ອມທັງຈັດຕັ້ງເຜີຍແຜ່ເຊື່ອມຊຶມ ໃຫ້ພະນັກງານ, ສະມາຊິກພັກ ພາຍໃນກົມຂອງຕົນຮັບຮູ້, ເຂົ້າໃຈ ແລະ ພ້ອມກັນປະຕິບັດ ຫັນໃສ່ວຽກງານຕົວຈິງຂອງຕົນ ໃຫ້ໄດ້ຮັບຜົນດີ.

**ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

ຄຳພັນ ເຜີຍຍະວົງ